# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ 6 ທັນວາ 2009 (12-6-2009)

## ເຊີນສະເດັດມາອົງພຣະເຢຊູຜູ້ເຮົາລໍຄອຍ

**ຂໍ້ພຣະຄັມພີໃນບົດຮຽນນີ້:** ມີກາ 5:1-5ກ; 7:18-20

**ຄໍາຖາມຊີວິດ:** ບົດຮຽນນີ້ເປັນຜົນສະທ້ອນຕໍ່ຊີວິດຂອງທ່ານເພາະເຮົາຈະມີທາງໄດ້ຮັບຄວາມປອດພັຍເປັນຢ່າງດີ, ໄດ້ຮັບການເບິ່ງແຍງ, ແລະໄດ້ຮັບຄວາມລອດພົ້ນ.

**ພຣະຄັມພີແຫ່ງຄວາມຈິງ:** ຜູ້ປະກາດພຣະທັມມີກາໄດ້ທໍານວາຍຕໍ່ຄົນທີ່ຖືກເຈັບ. ເຣື່ອງທີ່ເພິ່ນທໍານວາຍນັ້ນແມ່ນວ່າມີພຣະເຈົ້າຜູ້ນໍາຄວາມປອດພັຍມາສູ່ຄົນຂອງພຣະອົງ. ຄໍາທໍານວາຍນີ້ໄດ້ສໍາເຣັດລົງໃນອົງພຣະເຢຊູຜູ້ເປັນອົງພຣະເມຊີອາ.

**ຜົນສະທ້ອນຕໍ່ຊີວິດ:** ຄົນອາວຸໂສເກືອບທຸກຄົນໄດ້ຖືກເສຖກິດບັງຄັບ, ມີບັນຫາທາງດ້ານຄວາມສັມພັນຂນົບທໍານຽມ ແລະ ຄວາມເຊື່ອຖື. ພວກເຂົາລໍຄອຍຮັບເອົາຄວາມປອດພັຍຊຶ່ງມີຢູ່ແຕ່ໃນອົງພຣະເຢຊູພຽງເທົ່ານັ້ນ.

ແມ່ນແລ້ວຄົນຜູ້ອາວຸໂສໃນທຸກວັນນີ້ຖືກເສຖກິດບັງຄັບ, ມີບັນຫາທາງດ້ານຄວາມສໍາພັນ ຂນົບທໍານຽມ ແລະຄວາມເຊື່ອຖື. ບາງຄົນອາດບໍ່ຮູ້ຕົວ ແຕ່ຢ່າງໃດກໍຕາມພວກເຂົາລໍຄອຍເອົາຄວາມປອດພັຍເຂົ້າມາສູ່ຊີວິດ ແລະເຫັນສິ່ງທີ່ພວກເຂົາປາຖນານັ້ນມີຢູ່ໃນອົງພຣະເຢຊູເທົ່ານັ້ນເພາະພຣະອົງຊົງເປັນພຣະເມຊີອາຜູ້ຊ່ວຍໃຫ້ລອດພົ້ນໄດ້.

ໃນສມັຍຂອງກະສັດໂຈແຕມປົກຄອງ ພຣະເຈົ້າໄດ້ດົນບັນດານໃຫ້ຜູ້ປະກາດພຣະທັມມີກາກ່າວຕໍ່ພວກອິສຣາເອັນທາງເໜືອແລະຄົນຢູດາທາງໃຕ້. ກະສັດອາຮັດ ແລະກະສັດເຮຊາກີຢາ ໃນປີ 740-700 ກ່ອນ ຄສ. ຜູ້ປະກາດພຣະທັມໄດ້ບອກເຖິງເຄາະຮ້າຍຈະມາເຖິງເພາະພວກເຂົາໄດ້ພາກັນປະລະພຣະຜູ້ເປັນເຈົ້າ, ແຕ່ຜູ້ປະກາດພຣະທັມຍັງໃຫ້ຄວາມຫວັງຕໍ່ຝູງຊົນເຫລົ່ານັ້ນ ເພາະພຣະອົງຍັງເປັນຫ່ວງໃຍຕໍ່ພວກເຂົາຢ່າງຫລົ້ນເຫລືອ. ຜູ້ໃດທີ່ຍອມເຂົ້າມາຫາພຣະອົງດ້ວຍຄວາມເຊື່ອ ຜູ້ນັ້ນຈະໄດ້ຮັບການໃຫ້ອະພັຍ ໄດ້ຮັບການລ້ຽງດູ, ແລະປະທານຄວາມພົ້ນໃຫ້ແກ່ຄົນນັ້ນ.

### 1. ພວກເຮົາຕ້ອງການຢ່າງໃຫຍ່ຫລວງ (ມີກາ 5:1-3)

ເຣື່ອງການປະກາດອັນໂສກເສົ້າ ແລະມີຄວາມຫວັງນັ້ນເປັນພະລັງອໍານາດໃຫຍ່ຊຶ່ງເຮັດໃຫ້ນັກຂຽນບັນລະຍາຍເປັນບົດເພງຂຶ້ນມາ, ຊຶ່ງມີຊື່ວາ "ເຊີນສະເດັດມາອົງພຣະເຢຊູຜູ້ຄົນລໍຄອຍ ພຣະອົງບັງເກີດມາເພື່ອປະທານສັນຕິສຸກແກ່ປະຊາກອນຂອງພຣະອົງ; ຈາກຄວາມຢ້ານແລະຜິດບາບ; ຂໍໃຫ້ພວກຜູ້ຂ້າໄດ້ພັກເຊົາໃນທ່ານ. ພວກອິສຣາເອັນໄດ້ພົບກໍາລັງແລະການໜູນໃຈໃນພຣະເຈົ້າເທົ່ານັ້ນ"

ຜູ້ປະກາດພຣະທັມມີກາໄດ້ປະນາມຜູ້ນໍາທີ່ໃຊ້ອໍານາດຂົ່ມເຫງປະຊາຊົນ ແລະຜູ້ນໍາທາງສາສນາເຮັດບໍ່ເປັນທັມຊຶ່ງມີການໂລບມາກໂລພາດ້ານວິນຍານ. ມີກາໄດ້ເອີ້ນໃຫ້ຄົນກັບຄືນມາຫາແລະຮັບໃຊ້ພຣະເຈົ້າດ້ວຍຄວາມມີທັມ, ດ້ວຍຄວາມສັດຊື່, ແລະຖ່ອມໃຈລົງ (6:8). ການເວົ້າດັ່ງນີ້ໄດ້ກໍດ້ວຍອໍານາດຂອງພຣະວິນຍານຂອງພຣະເຈົ້າຢ່າງກ້າຫານ

ແລະສັດຊື່ (3:8).  ມີກາໄດ້ບອກເຖິງເຫດຜົນທີ່ພຣະເຈົ້າຕັດສິນລົງໂທດກໍເພາະຝູງຊົນໄດ້ເຮັດຜິດບາບຕໍ່ສູ້ພຣະເຈົ້າ. ມີກາ ໄດ້ປະກາດການທໍາລາຍເມືອງຊາມາເຣັຽ (ເວລາພວກອັດຊີເຣັຽໄດ້ຊັຍຊະນະຕໍ່ອິສຣາເອັນໃນປີ 722 ກ່ອນຄສ).

ມີກາຍັງກ່າວຕໍ່ໄປວ່າເມືອງຢູດາກໍຕ້ອງຖືກຕັດສິນເຊັ່ນກັນ, ແຕ່ພຣະເຈົ້າຈະສົ່ງຜູ້ປົກຄອງມາຫາພວກເຂົາ ເຊື້ອສາຍຂອງດາວິດມາບັງເກີດໃນເມືອງເບດເລເຮັມ-ເພິ່ນຈະປົກຄອງດ້ວຍຄວາມທ່ຽງທັມ (5:2-5).  ມີກາ ໄດ້ທໍານວາຍໄວ້ວ່າພຣະເຈົ້າຈະອະນຸຍາດໃຫ້ປະຊາກອນຂອງພຣະອົງຖືກເຈັບໄປເປັນຊະເລີຍໃນກຸງບາບີໂລນ ແລະໃນທີ່ສຸດພຣະອົງກໍຈະມາຊ່ອຍກູ້ພວກເຂົາໃຫ້ພົ້ນພັຍ (4:10).   ຜູ້ປະກາດພຣະທັມໄດ້ເຕືອນປະຊາຊົນວ່າດ້ວຍການຖືກຢຶດເປັນເມືອງຂຶ້ນນັ້ນແມ່ນສິ່ງພຣະເຈົ້າໃຊ້ຕໍ່ສູ້ພວກເຂົາ.  ພຣະເຈົ້າເອງຈະເປັນຜູ້ປະທານກໍາລັງຕໍ່ຜູ້ອ່ອນເພັຽ ແລະຖືກຂົ່ມເຫງ. ພຣະເຈົ້າຈະເປັນຜູ້ຈັດຫາໃຫ້ມີຜູ້ນໍາຈາກເມືອງເບັດເລເຮັມ ອີຟຣາຕາ ເປັນເມືອງນ້ອຍແລະບໍ່ມີຄວາມໝາຍຫຍັງໃນຢູດາ.

**ເບັດເລເຮັມ ອີຟຣາຕາ**

ພຣະຄັມພີເດີມໄດ້ເວົ້າເຖິງເມືອງເບດເລເຮັມນີ້ຫລາຍເທື່ອ.  ເມືອງນີ້ມີຫລາຍຄົນຮູ້ຈັກດີແລະເອີ້ນເມືອງນີ້ວ່າເປັນບ້ານເກີດເມືອງນອນຂອງກະສັດດາວິດ  ແລະເປັນບ່ອນຜູ້ປະກາດພຣະທັມຊາມູເອນໄດ້ສະຖາປະນາຜູ້ລ້ຽງແກະເປັນກະສັດ ຜູ້ທີສອງຂອງພວກອິສຣາເອັນ ( 1 ຊມອ 16:1-13).  ຊື່ເບັດເລເຮັມມີຄວາມໝາຍວ່າ,  "ເຮືອນແຫ່ງເຂົ້າຈີ່" ຊຶ່ງຕັ້ງຢູ່ທາງທິດຕາເວັດຕົກສ່ຽງໃຕ້ຂອງກຸງເຢຣູຊາເລັມ.  ຄໍາເວົ້າ ອີຟຣາຕາ ອາດເປັນເຜົ່າທີ່ສໍາຄັນໃນເມືອງເບັດເລເຮັມ.

**ບົດເພງຄຣິສະຕຽນໄດ້ທໍານວຍໄວ້ໃນພຣະຄັມພີເດີມເຖິງພຣະເມຊີອາ**

"ເຊີນສະເດັດມາອົງພຣະເຢຊູຜູ້ຄົນລໍຄອຍ"
"ເຊີນສະເດັດມາອົງພຣະເອມານູເອັນ"
"ອວຍພຣະພອນແກ່ພຣະເຈົ້າຂອງອິສຣາເອັນ"
"ອົງພຣະເອມານູເອັນ"
"ຈົ່ງລຸກຂຶ້ນ, ແສງສະຫວ່າງໄດ້ສ່ອງເຂົ້າມາ"

700 ປີຕໍ່ມາ ມັດທາຍໄດ້ສເນີການກໍາເນີດຂອງອົງພຣະເຢຊູທີ່ເມືອງເບັດເລເຮັມຊຶ່ງຜູ້ປະກາດມີກາໄດ້ ເວົ້າເຖິງແລະສໍາເຣັດລົງ. (ມັດທາຍ 2:1-6).  ມີກາໄດ້ໜູນໃຈຄົນທັງຫລາຍໂດຍເຕືອນພວກເຂົາວ່າກິຈການຂອງພຣະເຈົ້າຢ່າງບໍ່ຄາດຝັນໄດ້ມາຫາພວກເຂົາຜູ້ບໍ່ມີຄວາມຫວັງ.  ພຣະເຈົ້າໄດ້ເຮັດໃຫ້ສິ່ງທີ່ໄດ້ທໍານວາຍໄວ້ນັ້ນເປັນຈິງໂດຍໃຊ້ຄົນຜູ້ຕໍ່າຕ້ອຍໃຫ້ປະກອບສ່ວນກັບແຜນການອັນສໍາຄັນຂອງພຣະອົງ.  ພວກເຮົາກາຍເປັນຜູ້ສໍາຄັນໃນເມື່ອພວກເຮົາໄດ້ຍອມຮັບເອົາແຜນການຂອງພຣະເຈົ້າມາປະກອບຊີວິດປະຈໍາວັນ.  ຄໍາທໍານວາຍຂອງຜູ້ປະກາດພຣະທັມມີກາໄດ້ສໍາເຣັດລົງນັ້ນໄດ້ເຕືອນພວກເຮົາໃຫ້ລໍຄອຍດ້ວຍຄວາມອົດທົນເພື່ອຈະໄດ້ພົບເຫັນກັບຄໍາສັນຍາຂອງພຣະເຈົ້າ  ແລະເພື່ອພຣະເຈົ້າຈະອວຍພຣະພອນແກ່ຝູງຊົນ.

ຜູ້ປະກາດພຣະທັມມີກາໄດ້ເວົ້າເຖິງອະນາຄົດເວລາຜູ້ປົກຄອງໄດ້ປະຖິ້ມຄົນຂອງຕົນຊົ່ວລະຍະນຶ່ງ,  ແຕ່ມີກາໄດ້ເນັ້ນວ່າພຣະເຈົ້າມີແຜນການນໍາເອົາຄົນຂອງພຣະອົງກັບຄືນມາໃນດິນແດນທີ່ໄດ້ສັນຍາໄວ້. ຄໍາທໍານວາຍໄດ້ເວົ້າເຖິງນັ້ນວ່າຈະມີເດັກຊາຍມາບັງເກີດໃນເມືອງເບັດເລເຮັມ  ແລະຈະໄດ້ແຕ່ງຕັ້ງອານາຈັກຄືນ ແລະເດັກນັ້ນຈະເປັນຜູ້ປົກຄອງທົ່ວໂລກ.  ເປັນຄວາມຈິງທີ່ເພງຮ້ອງສັຣເສີນໄດ້ບັນລະຍາຍວ່າ, "ກໍາລັງການຊູໃຈຂອງອິສຣາເອັນ,  ຄວາມຫວັງຂອງຄົນທັງໂລກ"

2.  <u>**ພວກເຮົາຕ້ອງການພຣະຜູ້ລ້ຽງ**</u> (ມີກາ 5:4-5ກ)

ໃຫ້ພວກເຮົາວາດພາບເບິ່ງວ່າຜູ້ນໍາເປັນເໝືອນຜູ້ລ້ຽງແກະ ຜູ້ກໍາລັງຢືນຢູ່ໃຕ້ພຣະພັກຂອງພຣະເຢໂຮວ່າຜູ້ມີພະລັງ ແລະອໍານາດ. ຜູ້ປະກາດພຣະທັມມີກາໄດ້ປະກາດວ່າປະຊາກອນຂອງພຣະເຈົ້າຈະມີຄວາມປອດພັຍໃນເມື່ອພວກເຂົາໄດ້ຕິດຕາມການນໍາພາຂອງພຣະເຈົ້າ. ເຢໂຮວາ ແປວ່າ "ເຮົາຈະເປັນຜູ້ທີ່ເຮົາເປັນຕລອດໄປ." ຜູ້ລ້ຽງທີ່ດີນັ້ນຈະໄດ້ຂຍາຍໄປທຸກແຫ່ງທົ່ວແຜ່ນດິນໂລກ. ເຊີນທ່ານເຂົ້າມາຮ່ວມສັຣເສີນພຣະເຈົ້າ ເຂົ້າມາຮັບເອົາຄໍາທີ່ກ່າວວ່າ, "ພຣະເຈົ້າຊົງເປັນຜູ້ລ້ຽງ" (ເພງສັຣເສີນ 23:1). ອົງພຣະເຢຊູກ່າວວ່າ ພຣະອົງເປັນຜູ້ລ້ຽງທີ່ດີ." ຜູ້ຍອມຕາຍເພື່ອຝູງແກະ (ໂຢຮັນ 10:10.).

ຜູ້ປະກາດພຣະທັມມີກາໄດ້ກ່າວຢ່າງເຂັ້ມແຂງວ່າ ພຣະເມຊີອາຈະປະທານສັນຕິສຸກ. ຄໍາວ່າ **ຊາໂຣມ** ເປັນພາສາເຮັບເຣີແປວ່າ **"ສັນຕິພາບ"** ຊຶ່ງທຸກຄົນຖືວ່າເປັນໂອກາດຍິນດີແລະສັນຕິສຸກ. ແທ້ຈິງ ມີກາໄດ້ເວົ້າອີກວ່າສັນຕິພາບຈະຕົກເປັນຂອງໄພ່ພົນຂອງພຣະເຈົ້າໃນທີ່ສຸດ. ອົງພຣະເຢຊູເອງໄດ້ກ່າວວ່າພຣະອົງສະເດັດມາເພື່ອນໍາເອົາ "ສັນຕິສຸກ" (ໂຢຮັນ 14:27). ອາຈານໂປໂລ ຍັງໄດ້ກ່າວ່າອົງພຣະເຢຊູເປັນ "ສັນຕິສຸກ" ຂອງພວກເຮົາ (ເອເຟໂຊ 2:14) ເປັນສິ່ງທີ່ພຣະອົງຈະປະທານແກ່ທຸກຄົນຜູ້ໄວ້ວາງໃຈໃນພຣະອົງ "ສັນຕິສຸກຂອງພຣະເຈົ້າ" ຊຶ່ງເປັນສິ່ງເກີນຄວາມເຂົ້າໃຈ (ຟລປ. 4:7).

ໃນເມື່ອພວກເຮົາໄດ້ມີຄວາມສັມພັນທີ່ດີກັບພຣະເຈົ້າ ພວກເຮົາຕ້ອງການໃຫ້ຄົນອື່ນມີຄວາມຮູ້ສຶກເຊັ່ນດຽວກັນ. ເຊີນໃຫ້ຄົນອື່ນໄປຮ່ວມໃນງານຄຣິສມາສເພື່ອໃຫ້ພວກເຂົາເຈົ້າໄດ້ເຫັນເຣື່ອງພຣະກໍາເນີດຂອງອົງພຣະເຢຊູຄຣິດ ຜູ້ເປັນເຈົ້າຂອງໃນວັນນັ້ນ.

ອົງຕາມອົງພຣະວິນຍານແລ້ວ ພວກເຮົາຄວນຊອກສະແຫວງຫາອົງພຣະຜູ້ເປັນເຈົ້າ. ອາຈານໂປໂລຊົງກ່າວດັ່ງນີ້: "ໂອ, ຊັບສົມບັດຂອງພຣະເຈົ້າມີຫລວງຫລາຍປານໃດໜໍ ພຣະປັນຍາທັງຄວາມຮອບຮູ້ຂອງພຣະອົງກໍເລິກລັບເທົ່າໃດ!...ພຣະສະງ່າຣາສີຂອງພຣະອົງກໍດໍາລົງຢູ່ເປັນນິດ. ອາແມນ. (ໂຣມ 11:33,36). ບາງຄົນຄຶດວ່າຕົນເອງໃຫຍ່ແລ້ວຮູ້ຫລາຍຢ່າງດີ ແລະບໍ່ສົນໃຈເຣື່ອງພຣະເຈົ້າ. ຖ້າພວກເຮົາຢາກໃຫ້ພຣະອົງນໍາພາໃນຊີວິດແລ້ວ ພວກເຮົາຈໍາເປັນຕ້ອງຮັບຮູ້ວ່າພຣະອົງຊົງເປັນຜູ້ສລຽວສລາດກວ່າເຮົາ ແລະ "ຍອມຖວາຍຕົນເອງເປັນເຄື່ອງບູຊາອັນມີຊີວິດຕໍ່ພຣະ ອົງ." (ໂຣມ 12:1).

### 3. <u>ພວກເຮົາຕ້ອງການຄວາມລອດພົ້ນ</u> (ມີກາ 7:18-20)

ຫລັງຈາກເວົ້າເຖິງປະວັດສາດອັນເສົ້າສລົດໃຈເພາະພວກອິສຣາເອັນເຮັດຜິດບາບຕໍ່ສູ້ພຣະເຈົ້າ (7:1-7), ຜູ້ປະກາດພຣະທັມມີກາໄດ້ຈົດໄວ້ເຖິງຄວາມສາລະພາບຜິດບາບທີ່ພວກອິສຣາເອັນໄດ້ຍອມຕໍ່ພຣະເຈົ້າ( ຂໍ້ 8-10). ເພິ່ນຍັງໄດ້ກ່າວເຖິງບົດເພງທີ່ພວກເຂົາໄດ້ຂຽນຂຶ້ນເພື່ອຍົກຍ້ອງສັຣເສີນພຣະເຈົ້າ ເພາະພຣະອົງເປັນພຣະຜູ້ລ້ຽງ ແລະເປັນຜູ້ປະທານຄວາມພົ້ນໃຫ້ແກ່ພວກເຂົາຊຶ່ງເປັນຝູງແກະ-ຜູ້ເປັນມໍຣະດົກທີ່ແຕກໄປຢູ່ຫລາຍໆບ່ອນ. ມີກາໄດ້ຕັ້ງຄໍາຖາມແລະຕອບເອງວ່າ ພຣະອົງເປັນໃຜ? ແລະບໍ່ມີໃຜເປັນເໝືອນພຣະອົງ.

ມີກາໄດ້ເວົ້າຢ່າງໝັ້ນໃຈວ່າ ພຣະເຢໂຮວານັ້ນບໍ່ມີຜູ້ທຽບໄດ້ ພຣະອົງບໍ່ເຄີຍມີຄວາມໂກດຮ້າຍຕລອດໄປ. ພຣະອົງຊອບພຣະທັຍໃນຄວາມຮັກແລະຊັດຊື່. ພຣະອົງຊົງຮັກທຸກໆຄົນແລະຕ້ອງການປະທານການອະພັຍໂທດຈາກຄວາມບາບ. ຕາມພຣະລັກສະນະຂອງພຣະເຈົ້າແລ້ວພຣະອົງບໍ່ເຄີຍປ່ຽນແປງຈາກສະພາບຂອງພຣະອົງ ພຣະອົງຈຶ່ງຮັກສາຄໍາໝັ້ນສັນຍາຂອງພຣະອົງເປັນນິດຕໍ່ອັບຣາຮາມ ແລະປະທານຄວາມພົ້ນໃຫ້ແກ່ທຸກຄົນຜູ້ໄວ້ວາງໃຈໃນພຣະອົງ.

| |
|---|
| ພຣະເຈົ້າຊົງເອີ້ນໃຫ້ພວກເຮົາມີຊີວິດຢູ່ຢ່າງຄົບບໍຣິບູນແລະມີຊີວິດຢູ່ເພື່ອຄົນອື່ນເພື່ອເຂົາເຈົ້າຈະໄດ້ຮັບເອົາສິ່ງສໍາຄັນໄດ້ຮັບຄວາມປອດພັຍແລະຮັບຄວາມລອດພົ້ນ. |

ຄວາມຮັກ ຄວາມພົ້ນທີ່ພຣະເຈົ້າປະທານແກ່ປະຊາກອນຂອງພຣະອົງນັ້ນ ພວກເຮົາສາມາດເຫັນໄດ້ເວລາພຣະອົງກະທຳຕໍ່ພວກເຂົາ. ມີກາໄດ້ໃຊ້ຄຳນາມສາມຄຳທີ່ເວົ້າເຖິງຄວາມຊົ່ວຊ້າ ແລະໃຊ້ກິຣິຍາສີ່ຄຳທີ່ເວົ້າເຖິງຄວາມສົງສານທີ່ພຣະເຈົ້າມີຕໍ່ພວກເຂົາ. ພຣະເຈົ້າເຮັດ (1) ເອົາອອກຫລືຍົກອອກຄວາມຜິດບາບຈາກຊີວິດ. (2) ເບິ່ງກາຍຄວາມເປັນກະບົດຂອງມະນຸດຕໍ່ພຣະອົງ. (3) ຢຽບຄວາມຜິດບາບໄວ້ໃຕ້ພຣະບາດ (4) ເອົາຄວາມຜິດບາບທັງໝົດໄປຖິ້ມໃນບ່ອນເລິກໃນທະເລ.

ໃນຄຳສອນຂອງພຣະຄັມພີໃໝ່ ສິ່ງເຫລົ່ານີ້ເປັນໄປໄດ້ກໍເພາະການກະທຳຂອງພຣະບຸດຂອງພຣະເຈົ້າ ຄືອົງພຣະເຢຊູຄຣິດ ຜູ້ທີ່ພຣະເຈົ້າໄດ້ສັນຍາວ່າຈະສົ່ງມາເປັນພຣະຜູ້ໄຖ່. ການທີ່ໄດ້ຮັບເອົາການອະພັຍບາບນັ້ນກໍດ້ວຍຄວາມເຊື່ອໃນອົງພຣະເຢຊູເທົ່ານັ້ນຕາມຜູ້ປະກາດພຣະທັມໄດ້ທຳນວາຍໄວ້ແຕ່ເດີມດຳບັນ.

ທ່ານມີຄວາມຍິນດີບໍ່ທີ່ໄດ້ຮັບເອົາຄວາມພົ້ນຈາກບາບໂດຍຜ່ານການສິ້ນພຣະຊົນ ແລະການຄືນພຣະຊົນຂອງອົງພຣະເຢຊູຄຣິດ? ຖ້າດີໃຈຂໍໃຫ້ທ່ານໃຊ້ເວລາກ່າວຂອບພຣະຄຸນໂດຍການອ້ອນວອນອະທິຖານຕໍ່ພຣະອົງ ເພາະພຣະອົງໄດ້ປະທານຄວາມພົ້ນເປັນຂອງຂວັນແກ່ທ່ານໃນວັນນີ້.

**ບົດຮຽນໃນຊີວິດ**

ຜູ້ປະກາດພຣະທັມມີກາ ໄດ້ເທສນາວ່າເຫດຜົນຄົນຂອງພຣະເຈົ້າໄດ້ຖືກຈັບໄປເປັນຊະເລີຍກໍເພາະພວກເຂົາບໍ່ຮັກ ບໍ່ເຊື່ອຟັງ ແລະຍອມຮັບໃຊ້ພຣະເຈົ້າ. ມີກາປະກາດວ່າຖ້າຢາກໄດ້ຄວາມປອດພັຍພວກເຂົາຈຳເປັນຕ້ອງມີຄວາມສັມພັນກັບພຣະເຈົ້າຄືນ ຄືຍອມຮັບເອົາອົງພຣະເຢຊູຜູ້ເປັນອົງສັນຍາຈາກພຣະເຈົ້າວ່າ ພຣະອົງນັ້ນແຫລະເປັນພຣະເມຊີອາ-ຜູ້ຊ່ອຍໃຫ້ພົ້ນ. ບົດຮຽນໄດ້ສອນພວກເຮົາໃຫ້ຕັ້ງໃຈຕໍ່ກັບສິ່ງທີ່ພຣະເຈົ້າໄດ້ເຮັດຕໍ່ປະຊາກອນຂອງພຣະອົງໃນສມັຍກ່ອນ ແລະພຣະອົງກໍຍັງກະທຳຕໍ່ຄົນໃນສມັຍນີ້ເຊັ່ນກັນ. ມີຫຍັງແດ່ທີ່ພວກເຮົາສາມາດຮຽນໃນບົດຮຽນນີ້?

- ໃນທຸກວັນນີ້ທຸກໆຄົນຢູ່ໃຕ້ການບັງຄັບທາງດ້ານຊັບສິນ, ມີບັນຫາໃນດ້ານຄວາມສຳພັນກັນ, ແລະດ້ານວິນຍານຈິດ.
- ທຸກໆຄົນຜູ້ສແວງພຣະເຈົ້າດ້ວຍຄວາເຊື່ອໃນອົງພຣະເຢຊູ ພວກເຂົາຈະໄດ້ຮັບຄວາມຊ່ວຍເຫລືອ ແລະຮັບຊັຍຊະນະດ້ວຍ.
- ພຣະເຈົ້າໄດ້ຊ່ອຍເຫລືອຜູ້ຢູ່ໃນສະພາບອັນຕະລາຍ ຫລືຜູ້ຖືກຂົ່ມເຫງ.
- ຄວາມພົ້ນນັ້ນພຣະເຈົ້າປະທານໃຫ້ທຸກຄົນຜູ້ທີ່ເຊື່ອໃນອົງພຣະເຢຊູ ຜູ້ເປັນອົງທີ່ພວກເຮົາລໍຄອຍມາແຕ່ເດີມດຳບັນ ເພາະພຣະອົງຊົງເປັນພຣະເມຊີອາ.
- ການຍອມຕໍ່ອົງພຣະເຢຊູ ຍອມໃຫ້ພຣະອົງເປັນພຣະຜູ້ລ້ຽງ ຜູ້ທີ່ເຊື່ອສາມາດພົບເກັບຄວາມປອດພັຍແລະສັນຕິສຸກໄດ້.
- ພຣະອົງໄດ້ເອີ້ນໃຫ້ພວກເຮົາມີຊີວິດຢ່າງຄົບບໍຣິບູນ ມີຊີວິດຢູ່ເພື່ອຄົນອື່ນ ເພື່ອຄົນອື່ນຈະໄດ້ຮັບສັນຕິສຸກແລະຄວາມລອດພົ້ນ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org.,by BV.